ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ການເຊົ່າສິນເຊື່ອ

ມາຮູ້ຈັກກັບການເຊົ່າສິນເຊື່ອ ຊຶ່ງຫຼາຍໆຄົນ, ຫ້າງຮ້ານຕ່າງໆ ແລະ ສັງຄົມທົ່ວໄປເຄີຍໄດ້ຍິນ, ໄດ້ໃຊ້ບໍລິການ ຫຼື ໃຫ້ບໍລິການ ແຕ່ຄວາມໝາຍ ແລະ ຫຼັກການທີ່ແທ້ຈິງເປັນແນວໃດ? ໃນໂອກາດນີ້ ຂ້າພະເຈົ້າຈະອະທິບາຍໃຫ້ບັນດາທ່ານໄດ້ຮັບຮູ້ ແລະ ກໍາໄດ້ໂດຍສັງເຂບ ດັ່ງນີ້:

**ການເຊົ່າສິນເຊື່ອແມ່ນຫຍັງ?** ການເຊົ່າສິນເຊື່ອຊຶ່ງກົງກັບພາສາອັງກິດວ່າ (Leasing) ແມ່ນ "ການສະໜອງສິນເຊື່ອເປັນວັດຖຸ, ພາຫະນະກົນຈັກ ແລະ ອື່ນໆ ຊຶ່ງຜູ້ໃຫ້ເຊົ່າສິນເຊື່ອ ເປັນຜູ້ສະໜອງໂດຍກົງ ຫຼື ຈັດຫາຊັບສິນເຊົ່າ ໃຫ້ແກ່ຜູ້ເຊົ່າສິນເຊື່ອ". ໂດຍເນື້ອແທ້ແລ້ວມັນແມ່ນການໃຫ້ສິນເຊື່ອປະເພດໜຶ່ງແຕ່ສິນເຊື່ອດັ່ງກ່າວແມ່ນເປັນວັດຖຸ ຊຶ່ງຜູ້ເຊົ່າສິນເຊື່ອຕ້ອງການນໍາໃຊ້ວັດຖຸເຂົ້າໃນທຸລະກິດຂອງຕົນໂດຍບໍ່ຕ້ອງການມີກໍາມະສິດໃນວັດຖຸດັ່ງກ່າວ ຫຼື ຕ້ອງການມີກໍາມະສິດແຕ່ບໍ່ຕ້ອງການລົງລາຍການວັດຖຸດັ່ງກ່າວໃນບັນຊີທຶນ ຫຼື ຈົດເຂົ້າໃນໃບສະຫຼຸບຊັບສົມບັດຂອງບໍລິສັດຕົນ. ອີກດ້ານໜຶ່ງໃນເບື້ອງຜູ້ໃຫ້ສິນເຊື່ອກໍ່ຕ້ອງການຈໍາກັດຄວາມສ່ຽງໃນການໃຫ້ສິນເຊື່ອໂດຍສະເພາະຖ້າໃຫ້ສິນເຊື່ອເປັນເງິນສົດ ທີ່ປະເຊີນກັບຄວາມສ່ຽງຫຼາຍດ້ານເປັນຕົ້ນແມ່ນ ຄວາມຫຍຸ້ງຍາກໃນການເກັບກູ້ໜີ້ສິນຄືນ ແລະ ການສູນເສຍອື່ນໆຊຶ່ງເກີດຂຶ້ນໄດ້ງ່າຍ ແຕ່ສໍາລັບການໃຫ້ສິນເຊື່ອເປັນວັດຖຸເຖິງຕົນຈະໃຫ້ມອບວັດຖຸໃຫ້ບຸກຄົນອື່ນ ຫຼື ບໍລິສັດອື່ນນໍາໃຊ້, ຄອບຄອງໃນຮູບແບບການເຊົ່າ ແຕ່ວັດຖຸນັ້ນແມ່ນຍັງເປັນກໍາມະສິດຂອງຜູ້ໃຫ້ສິນເຊື່ອຢູ່ ແລະ ຕົນຍັງສາມາດດໍາເນີນການຕ່າງໆ ຕາມກົດໝາຍ ແລະ ຕາມສັນຍາໄດ້.

ການເຊົ່າສິນເຊື່ອ ແບ່ງອອກເປັນສອງປະເພດ ຄື:

- ການເຊົ່າສິນເຊື່ອທາງການເງິນ (Financial Lease);
- ການເຊົ່າເພື່ອດໍາເນີນງານ (Operational Lease).

ການເຊົ່າສິນເຊື່ອທາງການເງິນ ຕໍ່ໄປນີ້ເອີ້ນວ່າ "ການເຊົ່າທາງການເງິນ" ແມ່ນການເຊົ່າສິນເຊື່ອ ເພື່ອແກ້ໄຂບັນຫາທາງການເງິນຂອງບໍລິສັດຜູ້ເຊົ່າເປັນຕົ້ນຕໍ ການເຊົ່າປະເພດນີ້ໂດຍສ່ວນຫຼາຍແລ້ວຊັບສິນເຊົ່າແມ່ນກົນຈັກໜັກ, ເຄື່ອງຈັກການຜະລິດ, ພາຫະນະຂົນສົ່ງ ແລະ ວັດຖຸອື່ນໆທີ່ນໍາໃຊ້ເຂົ້າໃນການຜະລິດ ແລະ ທຸລະກິດຂອງບໍລິສັດ ຫຼື ຜູ້ປະກອບການຕ່າງໆ. ເປັນຫຍັງຈຶ່ງເອີ້ນວ່າ **ເຊົ່າທາງການເງິນ**, ເຫດຜົນຫຼັກກໍ່ແມ່ນ ຜູ້ເຊົ່າບໍ່ຕ້ອງການລົງທຶນແຕ່ຕ້ອງການອອກລາຍຈ່າຍຂອງບໍລິສັດ ເພາະວ່າຖ້າອອກເປັນການລົງທຶນ ຫຼື ຊື້ວັດຖຸດັ່ງກ່າວເປັນຊັບສິນແລ້ວ ການຄິດໄລ່ອັດຕາສ່ວນຜົນຕອບແທນຕໍ່ເງິນລົງທຶນ (Return on Capital (ROC)) ແລະ ອັດຕາສ່ວນຜົນຕອບແທນຕໍ່ຊັບສິນ (Return on asset (ROA)) ອາດບໍ່ດີ, ຫຼື ຜູ້ປະກອບການບາງລາຍອາດບໍ່ຕ້ອງການລົງທຶນເປັນຈໍານວນຫຼາຍເນື່ອງຈາກໄລຍະເວລາຂອງບໍລິສັດ ຫຼື ໂຄງການບໍ່ຍາວ ຫຼື ບໍ່ແນ່ນອນ ຈຶ່ງຊອກຫາວັດຖຸອຸປະກອບເຂົ້າໃນການຜະລິດ ຫຼື ທຸລະກິດຂອງຕົນໃນຮູບແບບການເຊົ່າແທນ. ການເຊົ່າທາງການເງິນຍັງເປີດໂອກາດ ແລະ ໃຫ້ບູລິມະສິດແກ່ຜູ້ເຊົ່າໃນການຊື້ຊັບສິນເຊົ່າເມື່ອຄົບກໍານົດເວລາສັນຍາຊຶ່ງສິດດັ່ງກ່າວສາມາດກໍານົດໄວ້ໃນສັນຍາໃນເວລາເລີ່ມຕົ້ນ ຫຼື ພາຍຫຼັງສິ້ນສຸດສັນຍາແລ້ວຈຶ່ງຕົກລົງຊື້ກໍ່ໄດ້. ສະນັ້ນ, ການເຊົ່າທາງການເງິນນີ້ ແມ່ນແທດເໝາະກັບທຸລະກິດທີ່ມີວັດຖຸປະສົງນໍາໃຊ້ຊັບສິນທີ່ແຕກຕ່າງກັນແລ້ວແຕ່ເງື່ອນໄຂ ແລະ ຂໍ້ຈໍາກັດຂອງບໍລິສັດ ຫຼື ໂຄງການສະເພາະຂອງໃຜລາວ.

ການເຊົ່າສິນເຊື່ອເພື່ອດໍາເນີນງານໂດຍເນື້ອແທ້ແລ້ວແມ່ນບໍ່ແຕກຕ່າງຫຍັງກັບການເຊົ່າທົ່ວໄປ ເປັນການເຊົ່າໄລຍະສັ້ນໆເມື່ອສິ້ນສຸດສັນຍາເຊົ່າແລ້ວກໍ່ສົ່ງຄືນໃຫ້ຜູ້ໃຫ້ເຊົ່າ. ການກໍານົດໃຫ້ມີການໃຫ້ເຊົ່າເພື່ອດໍາເນີນງານນີ້ກໍ່ບໍ່ແຕກຕ່າງຫຍັງກັບການເຊົ່າເພື່ອທາງການເງິນບໍ່ວ່າເຫດຜົນທາງການເງິນກໍ່ຄືເຫດຜົນດ້ານການນໍາໃຊ້ ແຕ່ແຕກຕ່າງກັນຢູ່ບ່ອນວ່າ ຜູ້ເຊົ່າບໍ່ຕ້ອງການມີກໍາມະສິດຕໍ່ຊັບສິນເຊົ່າເມື່ອສິ້ນສຸດສັນຍາ ແລະ ຜູ້ເຊົ່າມີຈຸດປະສົງນໍາໃຊ້ຊັບສິນເຊົ່າໃນກໍານົດເວລາທີ່ແນ່ນອນ ເມື່ອຄົບກໍານົດເວລາແລ້ວຊັບສິນດັ່ງກ່າວກໍ່ບໍ່ມີປະໂຫຍດຫຍັງສໍາລັບຜູ້ເຊົ່າ ແລະ ຕ້ອງໄດ້ສົ່ງຊັບສິນດັ່ງກ່າວນັ້ນຄືນໃຫ້ຜູ້ໃຫ້ເຊົ່າ. ນອກນີ້ຍັງເປີດໂອກາດໃຫ້ບໍລິສັດເຊົ່າສິນເຊື່ອ ມີຊ່ອງທາງໃນການບໍລິຫານຊັບສິນຂອງຕົນໄດ້ຫຼາຍຊ່ອງທາງຕື່ມ.

ຕໍ່ໄປນີ້ ຜູ້ຂຽນຈະມາຍົກໃຫ້ເຫັນເຖິງການຈັດຫາຊັບສິນເຊົ່າ, ສິດໃນການເລືອກຊັບສິນເຊົ່າຂອງຜູ້ເຊົ່າກ່ອນ ຫຼື ໃນເວລາເຂົ້າຮ່ວມສັນຍາ ໃນວິທີປະຕິບັດທີ່ສາກົນປະຕິບັດ ແລະ ໃນດຳລັດວ່າດ້ວຍທຸລະກິດເຊົ່າສິນເຊື່ອ ເລກທີ 471/ລບ ລົງວັນທີ 01 ກໍລະກົດ 2021 ໄດ້ກຳນົດໄວ້ ຊຶ່ງຜູ້ເຊົ່າສິນເຊື່ອສາມາດເລືອກຊັບສິນເຊົ່າຈາກຜູ້ສະໜອງໄດ້ດ້ວຍຕົນເອງ ຫຼື ໃຫ້ຜູ້ເຊົ່າສາມາດແນະນຳ, ຈັດຫາຜູ້ສະໜອງດັ່ງກ່າວໃຫ້ ເມື່ອຜູ້ເຊົ່າຕັດສິນໃຈຮັບເອົາຊັບສິ່ງຂອງທີ່ເປັນເປົ້າໝາຍເຊົ່າແລ້ວ ບໍ່ວ່າຈະແມ່ນຕົນເລືອກເອງ, ຊອກຫາເອງ ຫຼື ຜູ້ໃຫ້ເຊົ່າແນະນຳໃຫ້ ຜູ້ໃຫ້ເຊົ່າຈະຊື້ຊັບສິນດັ່ງກ່າວໃນນາມຂອງຕົນແລ້ວຈຶ່ງໃຫ້ຜູ້ເຊົ່າເຊົ່າຕໍ່ ໂດຍສ້າງສັນຍາສິນເຊື່ອນຳກັນ ລະຫວ່າງຜູ້ເຊົ່າ ແລະ ຜູ້ໃຫ້ເຊົ່າ. ໃນບາງກໍລະນີຖ້າຫາກວ່າຜູ້ໃຫ້ເຊົ່າ ມີຊັບສິນເປັນຂອງຕົນເອງແລ້ວກໍ່ສາມາດສະເໜີຊັບສິນດັ່ງກ່າວໃຫ້ຜູ້ເຊົ່າ ເຊົ່າໄດ້ບົນພື້ນຖານການຕົກລົງເຫັນດີຂອງທັງສອງຝ່າຍ. ໃນທາງກົດໝາຍແລ້ວຫຼາຍຄົນຍັງມີຄວາມສັບສົນວ່າ ສັນຍາເຊົ່າສິນເຊື່ອແມ່ນສັນຍາຫຼາຍຝ່າຍ ຊຶ່ງເກີດຂຶ້ນລະຫວ່າງຜູ້ໃຫ້ເຊົ່າ, ຜູ້ສະໜອງ ແລະ ຜູ້ເຊົ່າ ແຕ່ເມື່ອວິໃຈຄັກໆແລ້ວມັນມີສອງສັນຍາທີ່ເກີດຂຶ້ນໃນຊັບອັນດຽວ ຄື: 1. ສັນຍາຊື້-ຂາຍ ຊຶ່ງເກີດຂຶ້ນລະຫວ່າງຜູ້ສະໜອງ (ຜູ້ຂາຍຊັບສິນ) ແລະ ບໍລິສັດເຊົ່າສິນເຊື່ອ (ຜູ້ຊື້ຊັບສິນ); 2. ເມື່ອບໍລິສັດເຊົ່າສິນເຊື່ອໄດ້ຊື້ຊັບສິນແລ້ວ ຊັບດັ່ງກ່າວກໍ່ຕົກເປັນກຳມະສິດຂອງບໍລິສັດແລ້ວຈຶ່ງມາເຮັດສັນຍາເຊົ່າສິນເຊື່ອກັບຜູ້ເຊົ່າອີກຕໍ່ໜຶ່ງ. ສະນັ້ນ, ຂໍ້ຜູກພັນຕ່າງໆໃນສັນຍາເຊົ່າສິນເຊື່ອຈຶ່ງເກີດຂຶ້ນລະຫວ່າງຜູ້ໃຫ້ເຊົ່າ ແລະ ຜູ້ເຊົ່າເທົ່ານັ້ນ ຈະບໍ່ກ່ຽວກັບຜູ້ຂາຍຊັບດັ່ງກ່າວເລີຍ. ສະນັ້ນ, ຫຼາຍພາກສ່ວນຍັງເຂົ້າໃຈຜິດຢູ່ວ່າຕົນໄດ້ຊື້ລົດນຳບໍລິສັດຂາຍລົດ (ເຂົ້າໃຈວ່າຊື້) ໂດຍໄດ້ວາງເງິນງວດທຳອິດໄວ້ນຳສະຖາບັນການເງິນຊຶ່ງເຂົ້າໃຈວ່າເປັນຕົວແທນທາງການເງິນຂອງຮ້ານຂາຍລົດ ແຕ່ຕົວຈິງແລ້ວລົດດັ່ງກ່າວແມ່ນສະຖາບັນການເງິນໄດ້ຊື້ນຳບໍລິສັດຂາຍລົດແລ້ວ ແລະ ເປັນກຳມະສິດຂອງສະຖາບັນການເງິນ ແຕ່ເມື່ອມີບັນຫາສະຖາບັນການເງິນມາຍຶດເອົາລົດ ລູກຄ້າຈຶ່ງມາທວງຖາມນຳຜູ້ຂາຍແຕ່ໄດ້ຮັບການປະຕິເສດຄວາມຮັບຜິດຊອບ ແລະ ໃຫ້ໄປທວງນຳສະຖາບັນການເງິນແທນ ຊຶ່ງບັນຫານີ້ເກີດຂຶ້ນຫຼາຍໃນສັງຄົມ. ສະນັ້ນ, ຜູ້ຊື້ລົດຕ້ອງສອບຖາມໃຫ້ແນ່ໃຈວ່າ ຕົນໄດ້ຊື້ຜ່ອນລົດບໍ່? ຫຼືວ່າຕົນໄດ້ເຮັດການເຊົ່າສິນເຊື່ອ ຫຼື ເຊົ່າຊື້ບໍ່? ພ້ອມນີ້, ຜູ້ຂາຍ ແລະ ສະຖາບັນການເງິນ ກໍ່ຕ້ອງໄດ້ອະທິບາຍໃຫ້ລູກຄ້າຂອງຕົນໄດ້ເຂົ້າໃຈຢ່າງຈະແຈ້ງກ່ອນການເຂົ້າຮ່ວມສັນຍາ.

ຈາກຫຼັກການທີ່ກ່າວມາຂ້າງເທິງນີ້ ໃນເບື້ອງຂອງບໍລິສັດເຊົ່າສິນເຊື່ອ ສາມາດຜັນຂະຫຍາຍເພື່ອພັດທະນາເປັນຜະລິດຕະພັນຂອງຕົນໄດ້ຢ່າງຫຼາກຫຼາຍ ແຕ່ສຳຄັນແລ້ວຕ້ອງອະທິບາຍໃຫ້ລູກຄ້າຂອງຕົນໄດ້ເຂົ້າໃຈ ໂດຍສະເພາະແຕ່ລະປະເພດຂອງສັນຍາເຊົ່າສິນເຊື່ອ.

ເມື່ອອ່ານມາຮອດນີ້ ຄິດວ່າຜູ້ອ່ານຍັງມີຄວາມສົງໄສວ່າການເຊົ່າສິນເຊື່ອ ມັນແມ່ນການຊື້ສິນຄ້າໃນຮູບແບບການຈ່າຍຜ່ອນບໍ່? ບາງທ່ານອາດຄິດວ່າມັນແມ່ນການເຊົ່າຊື້ບໍ່ ແຕ່ຕົວຈິງມັນບໍ່ແມ່ນທັງສອງຢ່າງ ແຕ່ມັນມີລັກສະນະຄ້າຍຄືກັນ ໃນຮູບແບບຂອງການຈ່າຍເງິນເປັນງວດ. ການເຊົ່າສິນເຊື່ອໂດຍເນື້ອແທ້ແລ້ວມັນກໍ່ແມ່ນການເຊົ່ານີ້ລະ ແຕ່ມັນເປີດໂອກາດໃຫ້ຜູ້ເຊົ່າມີບູລິມະສິດຊື້ເອົາຊັບສິນເຊົ່າໃນເວລາສິ້ນສຸດສັນຍາ (ການເຊົ່າທາງການເງິນ) ໃນໄລຍະເວລາຂອງການປະຕິບັດສັນຍາເຊົ່າສິນເຊື່ອກຳມະສິດຕໍ່ຊັບສິນເຊົ່າຍັງເປັນຂອງຜູ້ໃຫ້ເຊົ່າ ຜູ້ເຊົ່າມີສິດແຕ່ນຳໃຊ້, ຄອບຄອງ ແລະ ໄດ້ຮັບໝາກຜົນຈາກວັດຖຸ ຫຼື ຊັບສິນເຊົ່ານັ້ນ.

ການຊື້ສິນຄ້າເປັນເງິນສິນເຊື່ອ ຫຼື ຊື້ຈ່າຍຜ່ອນມັນແມ່ນສັນຍາຊື້-ຂາຍ ຊຶ່ງຜູ້ຊື້ຈະໄດ້ກຳມະສິດຕໍ່ຊັບສິ່ງຂອງ ນັບແຕ່ຕົນໄດ້ຈ່າຍເງິນທັງໝົດ ຫຼື ສ່ວນໃດສ່ວນໜຶ່ງໄປແລ້ວ ແຕ່ຖ້າມີບັນຫາເລື່ອງການຊຳລະ ຜູ້ຂາຍມີສິດທວງເອົາແຕ່ເງິນທີ່ຍັງເຫຼືອເທົ່ານັ້ນ.

ສຳລັບການເຊົ່າຊື້ມັນຄ້າຍກັນກັບການເຊົ່າ ແລະ ການຊື້ໂດຍເອົາຫຼັກການສອງຫຼັກການນີ້ມາລວມກັນ ໂດຍຜູ້ເຊົ່າຊື້ຈະໄດ້ກຳມະສິດກໍ່ຕໍ່ເມື່ອຕົນໄດ້ຈ່າຍຄ່າວັດຖຸຄົບຖ້ວນຕາມທີ່ກຳນົດໄວ້ໃນສັນຍາ. ການເຊົ່າຊື້ອາດມີການວາງເງິນດາວໄວ້ກ່ອນໃນເວລາເລີ່ມຕົ້ນສັນຍາ ແລ້ວຈຶ່ງຜ່ອນຊຳລະເປັນງວດຈົນຮອດງວດສຸດທ້າຍຄົບຖ້ວນແລ້ວກຳມະສິດຕໍ່ຊັບສິ່ງຂອງຈຶ່ງຕົກເປັນຕົກເປັນຂອງຜູ້ເຊົ່າຊື້ທັນທີ.

ສະນັ້ນ, ມາຮອດນີ້ ທ່ານຜູ້ອ່ານພໍຈະເຫັນພາບໄດ້ໃນການປະຕິບັດໃນໄລຍະຜ່ານມາ ຢູ່ປະເທດເຮົາການເຊົ່າສິນເຊື່ອແມ່ນເກືອບບໍ່ມີເລີຍ ແຕ່ຮູບແບບທີ່ປະຕິບັດກັນຢູ່ໃນປັດຈຸບັນໃນບັນດາສະຖາບັນການເງິນ ຫຼື ບໍລິສັດເຊົ່າສິນເຊື່ອ ແມ່ນການເຊົ່າຊື້ຫຼາຍກວ່າ. ຍິ່ງໄປກວ່ານັ້ນຍັງເຮັດໃນຮູບແບບການຊື້-ຂາຍຜ່ອນໄປເລີຍເພື່ອແຂ່ງຂັນທາງການຕະຫຼາດ ແລະ ຕາມຄວາມນິຍົມ ແລະ ຄ່ານິຍົມຂອງຄົນລາວທີ່ຕ້ອງການກຳມະສິດໃນຊັບສິນ ໂດຍສະເພາະລົດຈັກ, ລົດໃຫຍ່ ແລະ ພາຫະນະຂົນສົ່ງຕ່າງໆ ຊຶ່ງໃຜໆກໍ່ຢາກໃສ່ຊື່ເຈົ້າຂອງພາຫະນະເປັນຊື່ຂອງຕົນ (ໃສ່ປ້າຍເຫຼືອງ) ດັ່ງນີ້ເປັນຕົ້ນ. ມາຮອດນີ້, ທ່ານຜູ້ອ່ານກໍ່ໄດ້ເຂົ້າໃຈເຖິງຫຼັກການພື້ນຖານຂອງການເຊົ່າສິນເຊື່ອ, ປະເພດຂອງການເຊົ່າສິນເຊື່ອ ແລະ ຄວາມແຕກຕ່າງຂອງການເຊົ່າສິນເຊື່ອ ກັບ ການຊື້-ຂາຍຜ່ອນ ແລະ ການເຊົ່າຊື້. ໃນໂອກາດໜ້າຜູ້ຂຽນຈະລົງເລິກຕື່ມກ່ຽວກັບທຸລະກິດເຊົ່າສິນເຊື່ອ.

**#ບົດຄວາມໂດຍ: ທ່ານ ໄຊລືຊາ ພູຍຍະວົງ. ຫົວໜ້າກົມນິຕິກຳ, ທະນາຄານແຫ່ງ ສປປ ລາວ**